# ການລ້ຽງໄກ່ເຫລືອງ

ໄກ່ເຫລືອງ,ເປັນພັນທີ່ລ້ຽງງ່າຍ,ໃຫຍ່ໄວ,ເໝາະສົມກັບສະພາບດິນຟ້າອາກາດຂອງບ້ານເຮົາ.ຈຸດພິເສດຂອງໄກ່ເຫລືອງໃຫ້ໄຂ່ ຫລາຍກ່ວາໄກ່ ລາດ, ສາມາດໃຫ້ໄຂ່ປະມານ 150 ໜ່ວຍ ຕໍ່ປີ.

## ການເລືອກສະຖານທີ່:

ຕ້ອງເປັນບ່ອນຫ່າງໄກຈາກຊຸມຊົນ, ເປັນບ່ອນດິນໂນນ ນ້ຳບໍ່ຖ້ວມ,ສາມາດລະບາຍນ້ຳໄດ້ດີ, ມີຕົ້ນໄມ້ບັງແດດໃນຕອນທ່ຽງ, ມີເດີ່ນຫຍ້າໃຫ້ໄກ່ໄດ້ຫາກິນ, ເປັນບ່ອນທີ່ມີອາກາດປອດໂປ່ງບໍ່ເຄີຍເກີດພະຍາດມາກ່ອນ.

## 1. ການສ້າງຄອກໄກ່:

ຫລັງຄາອາດມຸງດ້ວຍຫຍ້າຄາ, ສັງກະສີຫລື ຝາຫລັງຄາສູງຢ່າງນ້ອຍ 1,80 ແມັດ, ພື້ນຄອກຄວນເອົາຂີ້ແກບ ຂີ້ເລື່ອຍ ມາໃສ່ໃຫ້ໜາປະມານ 5 ຊັງຕີແມັດ ເພື່ອດູດຊຶມນ້ຳຈາກຂີ້ໄກ່ເຮັດໃຫ້ພື້ນຄອກແຫ້ງສະອາດດີປ້ອງກັນພະຍາດ.



ຮູບ:

ຮູບ1: ຄອກໄກ່ຫຼັງຄາໜ້າຈົວ



ຮູບ2: ເທີບໝາແຫນງນກ່າຍ



ຮູບ3: ເທີນໝາແໝງນ

## ອຸປະກອນສຳລັບລ້ຽງໄກ່:



1. ຮາງອາຫານ



2. ຮາງນ້ຳ



3. ຮັງໄຂ່(ໃຊ້ກະຕ່າຫລື ວັດສະດຸອື່ນໆ



4. ຄອນນອນ

## 2. ການຄັດເລືອກພໍ່ແມ່ພັນ:

ການຄັດເລືອກໄກ່ເຮັດເປັນພໍ່ແມ່ພັນ ຕ້ອງເລືອກຈາກພໍ່ແມ່ນພັນທີ່ມີ ລັກສະນະຄຸນສົມບັດຄື:

ເລີ້ມໄຂ່ໄວ(ອາຍຸ 23—28 ອາທິດ) ໜ້າຕາແຈ່ມໃສ,,ໂຕໃຫຍ່, ຫອນ ແລະ ຕ້າງສີແດງ, ລ້ຽງລູກດີ, ຟັກໄຂ່ເກັ່ງ, ກະດູກຜົ້ງກົ້ນກ້ວາງ

ສຳລັບພໍ່ພັນ ປະສົມພັນເກັ່ງ,ຄວນປ່ຽນພໍ່ພັນທຸກໆ 2 ປີ ຫລີກເວັ້ນບໍ່ໃຫ້ພໍ່ປະສົມພັນກັບລູກມັນເອງ.



ໄກ່ໄຂ່ດີຂຶ້ນຂາດສ້ອຍ

## 3. ການອະນຸບານໄກ່ນ້ອຍ:

ໄກ່ນ້ອຍແຕກໃໝ່ຕ້ອງການອຸນ ຫະພູມ 36—37 ອົງສາ, ເຮົາຕ້ອງເຮັດຄອກອະນຸບານໄກ່ນ້ອຍ, ໂດຍໃຊ້ຝາກະແຕະມາຂຶດເປັນວົງມົນ ກ້ວາງ 1,20 ແມັດ, ສູງ 60 ຊັງຕີແມັດ ຫລື ໃຊ້ຈຳພວກໄມ້ໄຜ່ມາເຮັດເປັນ ຄອກ, ໃສ່ ດອກໄຟ 100 ວັດ 2—3 ດອກຕໍ່ໄກນ້ອຍ 100 ໂຕ, ຕ້ອງໃຫ້ນ້ຳໄກ່ນ້ອຍບໍ່ໃຫ້ຂາດ.





ຄອກອະນຸບານໄກ່ນ້ອຍ

## 4. ອາຫານ ແລະ ການໃຫ້ອາຫານ

ອາຫານໄກ່ໄດ້ມາຈາກ 3 ແຫລ່ງຄື: ໄດ້ຈາກພືດ,ຈາກສັດ ແລະ ຈາກແຮ່ທາດຕ່າງໆ,ອາຫານໄກ່ປະກອບດ້ວຍ 4 ທາດໃຫ່ຍໆຄື:

ທາດພະລັງງານ: ແມ່ນໄດ້ມາຈາກ ສາລີ,ຮໍາ,ເຂົ້າປຽນ, ຫົວມັນຕົ້ນ ແລະ ຫົວມັນຕ່າງໆ.



*ຮໍາ*



*ສາລີ*



*ມັນຕົ້ນ*

ທາດຊີ້ນ: ແມ່ນໄດ້ມາຈາກ ຊີ້ນ,ປາ,ແມງໄມ້ຕ່າງໆ ແລະ ພືດຕະກຸນຖົ່ວຕ່າງໆ,ທາດຊີ້ນເຮັດໃຫ້ໄກ່ຈະເລີນເຕີບໂຕ.

ແຮ່ທາດ: ໄດ້ຈາກຈໍາພວກ ກະດູກ, ປີ້ຫອຍ, ປີ້ໄຂ່, ໄກ່ຕ້ອງການແຮ່ທາດເພື່ອສ້າງໂຄງກະດູກໃຫ້ແຂງແກ່ນ, ສ້າງປີ້ໄຂ່ອີກດ້ວຍ, ນອກນັ້ນຍັງເປັນສ່ວນປະກອບຂອງທາດຊີ້ນ,ເມັດເລືອດ ແລະ ແພຈຸລັງຕ່າງໆ.

ທາດວິຕາມິນ: ໄດ້ມາຈາກຈໍາພວກພືດສີຂຽວ ນອກນັ້ນຍັງໄດ້ຈາກນໍ້າມັນ, ຕັບສັດ, ຊີ້ນປົ່ນ, ນໍ້ານົມ

### ສູດອາຫານໄກ່:

| ວັດຖຸດິບ | ນໍ້າໜັກ (ກິໂລ) | %ທາດຊຮັ່ມ ໃນວັດຖຸດິບ | %ທາດຊຮັ່ມ ໃນອາຫານ |
|---|---|---|---|
| ສາລີ, ເຂົ້າປຽນ | 45 | 0,08 | 3,60 |
| ຮໍາອ່ອນ | 25 | 0,10 | 2,50 |
| ຖົ່ວເຫລືອງ | 10 | 0,40 | 4,00 |
| ປາປົ່ນ | 8 | 0,50 | 4,00 |
| ໃບກະຖິນ | 4 | 0,17 | 0,68 |
| ກະດູກປົ່ນ | 7,7 | 0,71 | 0,53 |
| ເກືອ | 0,3 | | |
| ລວມ | 100 | | 15,31 |

### ອັດຕາການໃຫ້ອາຫານໄກ່

| ອາຍຸໄກ່ | ຈ/ນອາຫານ (ກຣາມ/ມື້/ໂຕ) | ນໍ້າ (ມິນລີລິດ/ມື້/ ໂຕ |
|---|---|---|
| 1 ມື້— 2ອາທິດ | 20 | 40 |
| 15ມື້— 1 ເດືອນ | 40 | 80 |
| 1 — 2 ເດືອນ | 70 | 102 |
| 2—3 ເດືອນ | 100 | 150 |
| 3 ເດືອນຂຶ້ນໄປ | 120 | 200 |

## 5. ພະຍາດ

### ພະຍາດນິວຄາເຊີນ:

ແມ່ນພະຍາດຮ້າຍແຮງ ເກີດຈາກເຊື້ອໄວຣັດ ມັກເກີດກັບໄກ່ສະເພາະ, ໄກ່ທີ່ເປັນພະຍາດນີ້ຈະຕາຍເຖິງ 80—100%,ອາການທີ່ສະແດງອອກຄືໄກ່ຈະຕາຍຢ່າງກະ ທັນຫັນເປັນຈໍານວນຫລວງຫລາຍໄກ່ຈະຈາມ, ຫັນໃຈຍາກ, ອາຈົມ ເປັນສີຂຽວແກມເຫລືອງ, ຮ່າງກາຍບາງສ່ວນເປັນອໍາມະພາດ,ໄກ່ໂຕທີ່ລອດຕາຍຈະຄໍບິດຍ່າງເປັນວົງ ວຽນ, ພະ ຍາດນີ້ປົວບໍ່ໄດ້, ຕ້ອງປ້ອງກັນດ້ວຍວັກຊີນນິວຄາເຊີນຄື:

ວັກຊີນນິວຄາເຊີນອາຍຸອ່ອນໃຊ້ຢອດ ດັງ,ຕາໄກ່ນ້ອຍ 2—3 ຢອດ ແລະ ນິວຄາເຊີນອາຍຸແກ່ສັກກ້າມຊີ້ນໄກ່ ອາຍຸ 6 ອາທິດຂຶ້ນໄປ, ຄຸ້ມກັນໄດ້ 1 ປີ.

**Supported by**
**Laos Extension for Agriculture Project**
**P.O. Box 9159**
**Vientiane, Lao P.D.R.**

ກອງສົ່ງເສີມກະສິກໍາ ແລະ ປ່າໄມ້ ແຫ່ງຊາດ
ສູນສົ່ງເສີມການລ້ຽງສັດ ແລະ ປາ

# ເຕັກນິກ ການລ້ຽງໄກ່ເຫລືອງ



ໜ່ວຍງານຝຶກອົບຮົມ ເຕັກນິກດ້ານການລ້ຽງສັດ ແລະ ປາ
ໂທລະສັບ: (021) 621018
ແຟກ: (021) 621018
EMail : lec@laotel.com

ສະໜັບສະໜູນໂດຍ : ໂຄງການ ສົ່ງເສີມ ກະສິກໍາ (LEAP)